ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ສໍານັກງານນາຍົກລັດຖະມົນຕີ ເລກທີ 474/ນຍ.

ນະຄອນຫລວງວຽງຈັນ, ວັນທີ 18/11/2010.

# ດໍາລັດ
# ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍ ວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02/ສພຊ, ລົງວັນທີ 30 ມິຖຸນາ 2010;
- ອີງຕາມໜັງສືສະເໜີຂອງລັດຖະມົນຕີວ່າການ ກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ1220/ອຄ, ລົງວັນທີ 01 ມິຖຸນາ 2010.
-

## ນາຍົກລັດຖະມົນຕີ ອອກດໍາລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງລາຄາ ແນ່ໃສ່ຮັກສາສະຖຽນລະພາບດ້ານລາຄາ, ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງຜູ້ດໍາເນີນທຸລະກິດ ແລະ ຜູ້ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ.

**ມາດຕາ 2. ການຄຸ້ມຄອງລາຄາ**

ການຄຸ້ມຄອງລາຄາ ແມ່ນການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ໂດຍອີງການຄຸ້ມຄອງລາຄາ ບົນພື້ນຖານບັນດາຫຼັກການ ແລະ ຂໍ້ບັນຍັດທີ່ກໍານົດພາຍໃຕ້ດໍາລັດສະບັບນີ້.

**ມາດຕາ 3. ການອະທິບາຍຄໍາສັບ**

ຄຳສັບທີ່ໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

- **"ລາຄາ"** ໝາຍເຖິງ ຄ່າຕອບແທນ ທີ່ເປັນເງິນ, ວັດຖຸສິ່ງຂອງ ຫຼື ຜົນປະໂຫຍດອື່ນໆ ສຳລັບການຈຳໜ່າຍສິນຄ້າ ຫຼື ການບໍລິການ. ລາຄາປະກອບດ້ວຍ: ລາຄາທີ່ລັດຄຸ້ມຄອງ ແລະ ລາຄາທີ່ກຳນົດໂດຍຜູ້ດຳເນີນທຸລະກິດ;
- **"ລາຄາສູງສຸດ"** ໝາຍເຖິງ ລາຄາສູງສຸດຂອງສິນຄ້າ ຫຼືການບໍລິການ ທີ່ຜູ້ດຳເນີນທຸລະກິດສາມາດໃຫ້ການຈຳໜ່າຍ ຫຼືການບໍລິການ;
- **"ລາຄາຕໍ່າສຸດ"** ໝາຍເຖິງ ລາຄາຕໍ່າສຸດຂອງສິນຄ້າ ຫຼື ການບໍລິການ ທີ່ຜູ້ດຳເນີນທຸລະກິດສາມາດເກັບຊື້ ສິນຄ້າ ຫຼື ການບໍລິການ;
- **"ຂອບເຂດລາຄາ"** ໝາຍເຖິງ ລາຄາຂອງສິນຄ້າ ຫຼື ການບໍລິການ ທີ່ຜູ້ດຳເນີນທຸລະກິດສາມາດໃຫ້ການຈຳໜ່າຍ ຫຼື ການບໍລິການ ຈາກລະດັບຕໍ່າສຸດ ຫາສູງສຸດໃດໜຶ່ງ;
- **"ຜູ້ດຳເນີນທຸລະກິດ"** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຜະລິດ, ຈຳໜ່າຍ, ຊື້ເພື່ອການຈຳໜ່າຍ ຫຼື ນຳເຂົ້າເພື່ອການຈຳໜ່າຍ ຫຼື ການບໍລິການ ຢູ່ໃນຂອບເຂດດິນແດນ ຂອງ ສປປ ລາວ;
- **"ການຜະລິດ"** ໝາຍເຖິງ ການເຮັດ, ການປະສົມ, ການປຸງແຕ່ງ, ການປະກອບ , ການປະດິດ, ການປ່ຽນສະພາບ, ການປ່ຽນຮູບ, ການດັດແປງ, ການຄັດເລືອກ, ການແບ່ງບັນຈຸ, ການລວມບັນຈຸ ຫຼື ການເຮັດອັນໃດອັນໜຶ່ງໃຫ້ມີຂຶ້ນເປັນສິນຄ້າ ບໍ່ວ່າດ້ວຍວິທີໃດ ລວມທັງການເຮັດໃຫ້ ມີຂຶ້ນເປັນຊື່ທາງການຄ້າ ຫຼື ເຄື່ອງໝາຍການຄ້າສຳລັບສິນຄ້ານັ້ນ ບໍ່ວ່າຈະເຮັດເອງ ຫຼື ໃຫ້ຜູ້ອື່ນ ເຮັດໃຫ້ກໍຕາມ;
- **"ການຈຳໜ່າຍ"** ໝາຍເຖິງ ການຂາຍ, ການແລກປ່ຽນ, ການເອົາໃຫ້, ການແຈກຢາຍ ຫຼື ການໂອນສິດການຄອບຄອງສິນຄ້າໃຫ້ແກ່ບຸກຄົນອື່ນ;
- **"ສິນຄ້າ"** ໝາຍເຖິງ ວັດຖຸສິ່ງຂອງ ທີ່ໃຊ້ໃນການອຸປະໂພກ ຫຼື ບໍລິໂພກ ລວມທັງເອກະສານສະແດງສິດໃນວັດຖຸສິ່ງຂອງ;
- **"ການບໍລິການ"** ໝາຍເຖິງ ການຮັບໃຊ້, ການໃຫ້ໃຊ້, ການໃຫ້ປະໂຫຍດໃນຊັບສິນ ໂດຍມີຄ່າຕອບແທນເປັນເງິນ ຫຼື ຜົນປະໂຫຍດອື່ນ;
- **"ຜູ້ຊົມໃຊ້"** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້ ແລະ ນຳໃຊ້ສິນຄ້າ ແລະ ການບໍລິການ ຢ່າງຖືກຕ້ອງຕາມກົດໝາຍ ໂດຍບໍ່ມີຈຸດປະສົງທາງການຄ້າຢູ່ໃນຂອບເຂດດິນແດນຂອງ ສປປ ລາວ;
- **"ອົງການຄຸ້ມຄອງລາຄາ"** ໝາຍເຖິງ ອົງການລັດທີ່ມີສິດອຳນາດໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງລາຄາ;
- **"ລາຍການຄວບຄຸມລາຄາ"** ໝາຍເຖິງ ລາຍການຂອງສິນຄ້າ ແລະ ການບໍລິການ ທີ່

ອົງການຄຸ້ມຄອງລາຄາ ກຳນົດຂຶ້ນໃນແຕ່ລະໄລຍະ ເພື່ອນຳໃຊ້ມາດຕະການຄວບຄຸມລາຄາ;

- **"ລາຍການຕິດຕາມການເໜັງຕີງຂອງລາຄາ"** ໝາຍເຖິງ ລາຍການຂອງສິນຄ້າ ແລະ ການບໍລິການ ທີ່ອົງການຄຸ້ມຄອງລາຄາ ກຳນົດຂຶ້ນໃນແຕ່ລະໄລຍະ ເພື່ອຕິດຕາມການເໜັງຕີງຂອງລາຄາ;
- **"ຄັງແຮສຳຮອງ"** ໝາຍເຖິງ ຄັງ ຫຼື ສາງ ທີ່ສ້າງຂຶ້ນເພື່ອເກັບແຮສິນຄ້າ ທີ່ຢູ່ໃນລາຍການຄວບຄຸມລາຄາ;
- **"ການຖົມຊຸມ"** ໝາຍເຖິງ ການຊ່ວຍເຫຼືອຈາກລັດ ແກ່ຜູ້ດຳເນີນທຸລະກິດ ໂດຍທາງກົງ ຫຼື ທາງອ້ອມ ທີ່ມີຜົນຕໍ່ລະດັບລາຄາ ເພື່ອເປົ້າໝາຍການຄຸ້ມຄອງລາຄາ;
- **"ຄວາມຈຳເປັນ"** ໝາຍເຖິງ ຄວາມຈຳເປັນໃນການເຮັດໃຫ້ລາຄາມີສະຖຽນລະພາບ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ດຳເນີນທຸລະກິດ, ຂອງຜູ້ຊົມໃຊ້ ແລະ ຜົນປະໂຫຍດຂອງລັດ;
- **"ການບໍ່ຈຳແນກປະຕິບັດ"** ໝາຍເຖິງ ຫຼັກການການປະຕິບັດຢ່າງສະເໝີພາບກັນກ່ຽວກັບມາດຕະການຄຸ້ມຄອງລາຄາ ຕໍ່ສິນຄ້າ ແລະ ການບໍລິການ ທັງພາຍໃນ ແລະ ຕ່າງປະເທດ;
- **"ຄວາມໂປ່ງໃສ"** ໝາຍເຖິງການເຮັດໃຫ້ມາດຕະການຄຸ້ມຄອງລາຄາ ມີຄວາມຊັດເຈນ ແລະ ຖືກເຜີຍແຜ່ຕໍ່ສາທາລະນະຊົນ;

## ມາດຕາ 4. ຫຼັກການການຄຸ້ມຄອງລາຄາ

ການຄຸ້ມຄອງລາຄາ ຕ້ອງປະຕິບັດຕາມບັນດາຫຼັກການ ດັ່ງລຸ່ມນີ້:

1. ລາຄາ ຢູ່ ສປປ ລາວ ຖືກກຳນົດດ້ວຍກົນໄກຕະຫຼາດ ທີ່ມີການຄຸ້ມຄອງດັດສົມຂອງລັດ;
2. ລັດເຄົາລົບສິດໃນການກຳນົດລາຄາ ແລະ ການແຂ່ງຂັນດ້ານລາຄາ ຂອງຜູ້ດຳເນີນທຸລະກິດຕາມລະບຽບກົດໝາຍຢ່າງເຂັ້ມງວດ;
3. ລັດນຳໃຊ້ມາດຕະການໃນການຄຸ້ມຄອງລາຄາ ຕາມຄວາມຈຳເປັນ ບົນພື້ນຖານຫຼັກການ ການບໍ່ຈຳແນກປະຕິບັດ ແລະ ຄວາມໂປ່ງໃສ.

## ມາດຕາ 5. ຂອບເຂດການນຳໃຊ້

ດຳລັດສະບັບນີ້ ມີຜົນນຳໃຊ້ສຳລັບ ຜູ້ດຳເນີນທຸລະກິດ ແລະ ອົງການຄຸ້ມຄອງລາຄາ.

## ໝວດທີ 2
## ການຄຸ້ມຄອງລາຄາ

**ມາດຕາ 6. ມາດຕະການຄຸ້ມຄອງລາຄາ**

ໃນກໍລະນີມີຄວາມຈຳເປັນ, ອົງການຄຸ້ມຄອງລາຄາ ສາມາດນຳໃຊ້ມາດຕະການຄຸ້ມຄອງລາຄາດ້ວຍສອງຮູບແບບຄື: ມາດຕະການຄວບຄຸມລາຄາ ແລະ ມາດຕະການຕິດຕາມການເໜັງຕີງຂອງລາຄາ.

ມາດຕະການຄວບຄຸມລາຄາປະກອບດ້ວຍ:

1. ກຳນົດໂຄງປະກອບລາຄາ;
2. ກຳນົດລາຄາສູງສຸດ, ລາຄາຕ່ຳສຸດ ຫຼື ຂອບເຂດລາຄາ;
3. ຄວບຄຸມສິນຄ້າໃນຄັງແຮສຳຮອງ;
4. ຖົມຂຸມສິນຄ້າ ແລະ ການບໍລິການ;
5. ການດັດສົມການສະໜອງ ແລະ ຄວາມຕ້ອງການ.

ໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ, ໂດຍປະສານສົມທົບກັບຂະແໜ່ງການທີ່ກ່ຽວຂ້ອງ, ກຳນົດລະອຽດກ່ຽວກັບ (ກ) ລາຍການຄວບຄຸມລາຄາ ແລະ ລາຍການຕິດຕາມການເໜັງຕີງຂອງລາຄາ, (ຂ) ອົງການຄຸ້ມຄອງລາຄາ ສຳລັບແຕ່ລະລາຍການ, (ຄ) ມາດຕະການຄຸ້ມຄອງລາຄາທີ່ຈະນຳໃຊ້ ແລະ (ງ) ການົດເວລາຂອງການນຳໃຊ້ມາດຕະການດັ່ງກ່າວ.

**ມາດຕາ 7. ການກຳນົດໂຄງປະກອບລາຄາ**

ຜູ້ດຳເນີນທຸລະກິດ ຕ້ອງສົ່ງໂຄງປະກອບລາຄາ ສຳລັບລາຍການຄວບຄຸມລາຄາ ໃຫ້ອົງການຄຸ້ມຄອງລາຄາ ພິຈາລະນາຮັບຮອງເອົາ ກ່ອນການນຳໃຊ້ໂຄງປະກອບລາຄາດັ່ງກ່າວ ໃນການຈຳໜ່າຍ ຫຼື ການບໍລິການ. ໂຄງປະກອບລາຄາ ປະກອບດ້ວຍ: (ກ) ຕົ້ນທຶນການຜະລິດ ຫຼື ຕົ້ນທຶນຊື້ເພື່ອການຈຳໜ່າຍ (ຂ) ຕົ້ນທຶນການຈໍລະຈອນ (ຄ) ລາຄາການຈຳໜ່າຍ ແລະ (ງ) ກຳໄລ.

ອົງການຄຸ້ມຄອງລາຄາ ຕ້ອງນຳໃຊ້ຂໍ້ມູນຂອງໂຄງປະກອບລາຄາ ທີ່ໄດ້ຈາກຜູ້ດຳເນີນທຸລະກິດສະເພາະເປົ້າໝາຍການກຳນົດໂຄງປະກອບລາຄາ ເທົ່ານັ້ນ.

**ມາດຕາ 8. ການກຳນົດລາຄາສູງສຸດ, ລາຄາຕ່ຳສຸດ ຫຼື ຂອບເຂດລາຄາ**

ອົງການຄຸ້ມຄອງລາຄາ ສາມາດກຳນົດລາຄາສູງສຸດ, ລາຄາຕ່ຳສຸດ ຫຼື ຂອບເຂດລາຄາສຳລັບລາຍການຄວບຄຸມລາຄາ. ການກຳນົດລາຄາສູງສຸດ, ລາຄາຕ່ຳສຸດ ຫຼື ຂອບເຂດລາຄາ ອົງ

ໃສ່ພື້ນຖານ ດັ່ງລຸ່ມນີ້:

1. ໂຄງປະກອບລາຄາ;
2. ຄວາມຕ້ອງການ ແລະ ການສະໜອງ ຂອງສິນຄ້າ ແລະການບໍລິການ;
3. ອໍານາດການຊື້ ພາຍໃນປະເທດ;
4. ລາຄາ ຢູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ;
5. ນະໂຍບາຍການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.

**ມາດຕາ 9. ການຄວບຄຸມສິນຄ້າໃນຄັງແຮສໍາຮອງ**

ອົງການຄຸ້ມຄອງລາຄາ ສາມາດກໍານົດໃຫ້ຜູ້ດໍາເນີນທຸລະກິດ ສໍາລັບລາຍການຄວບຄຸມລາຄາເພີ່ມ ຫຼື ຫຼຸດປະລິມານສິນຄ້າໃນຄັງແຮສໍາຮອງເພື່ອປ້ອງກັນການກັກຕຸນສິນຄ້າ ຫຼື ການປັ່ນປ່ວນລາຄາ.

ຜູ້ດໍາເນີນທຸລະກິດ ຕ້ອງລາຍງານ ທີ່ຕັ້ງ, ປະລິມານ ແລະ ການເພີ່ມ ຫຼື ຫຼຸດປະລິມານຂອງຄັງແຮສໍາຮອງຂອງຕົນ ໃຫ້ອົງການຄຸ້ມຄອງລາຄາຊາບ.

**ມາດຕາ 10. ການຖົມຂຸມ**

ອົງການຄຸ້ມຄອງລາຄາ ສາມາດນໍາໃຊ້ມາດຕະການການຖົມຂຸມ ສໍາລັບລາຍການຄວບຄຸມລາ ເຊິ່ງລາຍລະອຽດຈະຖືກກໍານົດໃນລະບຽບການຕ່າງຫາກ.

**ມາດຕາ 11. ການດັດສົມການສະໜອງ ແລະຄວາມຕ້ອງການ**

ອົງການຄຸ້ມຄອງລາຄາ ສາມາດນໍາໃຊ້ມາດຕະການ ການດັດສົມການສະໜອງ ແລະຄວາມຕ້ອງການ ສໍາລັບລາຍການຄວບຄຸມລາຄາ ເຊິ່ງລາຍລະອຽດຈະຖືກກໍານົດໃນລະບຽບການຕ່າງຫາກ.

**ມາດຕາ 12. ການຕິດຕາມການເໜັງຕີງຂອງລາຄາ**

ອົງການຄຸ້ມຄອງລາຄາ ສາມາດຕິດຕາມການເໜັງຕີງຂອງລາຄາ ລວມທັງ ການຕິດປ້າຍລາຄາ ຂອງຜູ້ດໍາເນີນທຸລະກິດ.

## ໝວດທີ 3
## ການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ

**ມາດຕາ 13. ອົງການຄຸ້ມຄອງລາຄາ**

ອົງການຄຸ້ມຄອງລາຄາ ປະກອບດ້ວຍ:

- ກະຊວງອຸດສາຫະກຳ ແລະ ການຄ້າ;
- ຫ້ອງການອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ;
- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ;
- ຂະແໜງການອື່ນທີ່ກ່ຽວຂ້ອງ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ສ້າງຕັ້ງກອງເລຂາ ເພື່ອເປັນເສນາທິການໃນການຊີ້ນຳ, ນຳພາຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ໂດຍມອບໃຫ້ຫົວໜ້າກົມການຄ້າພາຍໃນ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ເປັນຫົວໜ້າກອງເລຂາດັ່ງກ່າວ.

**ມາດຕາ 14. ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະການຄ້າ**

ໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ, ກະຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້າ ນະໂຍບາຍ ແລະ ມາດຕະການ ໃນການຄຸ້ມຄອງລາຄາ;
2. ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ກ່ຽວກັບ ລາຄາ ແລະ ການດຳເນີນທຸລະກິດ ລວມທັງສະເໜີໂຄງການ, ແຜນງານ ແລະມາດຕະການເພື່ອຄຸ້ມຄອງລາຄາ;
3. ກຳນົດລະບຽບການ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ;
4. ຊີ້ນຳ, ນຳພາ ພະແນກອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ແລະ ເປັນໃຈກາງປະສານສົມທົບກັບຂະແໜ່ງການອື່ນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ;
5. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ຕາມດຳລັດສະບັບນີ້ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງ;
6. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ທົ່ວເຖິງ;
7. ຕິດຕາມການເໜັງຕີງຂອງລາຄາ ແລະ ຕິດຕາມພຶດຕິກຳ ທີ່ກ່ຽວຂ້ອງກັບການຄຸ້ມຄອງລາຄາຂອງຜູ້ດຳເນີນທຸລະກິດ;
8. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ, ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ລາຄາ;
9. ປັບໃໝຜູ້ທີ່ລະເມີດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງດຳລັດສະບັບນີ້ຢ່າງເຂັ້ມງວດຕາມ ລາຍການຄວບຄຸມລາຄາ ທີ່ຕົນເປັນອົງການຄຸ້ມຄອງລາຄາ;

10. ຕິດຕາມ, ກວດກາ, ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດຕາມເນື້ອ ໃນຂໍ້ 2, 3 ແລະ 7 ຂອງມາດຕານີ້ຕໍ່ລັດຖະບານ;
11. ອອກແຈ້ງການ, ລະບຽບການ, ຂໍ້ຕົກລົງ ແລະ ອື່ນໆ ຕາມການມອບໝາຍຂອງລັດຖະບານ;
12. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 15. ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ**

ໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ ມີສິດ ແລະ ໜ້າທີ່ໃນຂອບເຂດແຂວງ ຫຼື ນະຄອນ ຂອງຕົນດັ່ງນີ້:

1. ຄົ້ນຄວ້າ, ວິເຄາະ ແລະ ວິໄຈ ກ່ຽວກັບລາຄາ ແລະ ການດຳເນີນທຸລະກິດ ລວມທັງສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;
2. ຊີ້ນຳ, ນຳພາຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ ແລະ ປະສານສົມທົບກັບພະແນກການ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ;
3. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ຕາມດຳລັດສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ;
4. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ທົ່ວເຖິງ;
5. ຕິດຕາມການເໜັງຕີງຂອງລາຄາ ແລະ ຕິດຕາມພຶດຕິກຳ ທີ່ກ່ຽວຂ້ອງກັບການຄຸ້ມຄອງລາຄາຂອງຜູ້ດຳເນີນທຸລະກິດ;
6. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ລາຄາ;
7. ປັບໃໝ ຜູ້ທີ່ລະເມີດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງດຳລັດສະບັບນີ້ຢ່າງເຂັ້ມງວດຕາມ ລາຍການຄວບຄຸມລາຄາ ທີ່ຕົນເປັນອົງການຄຸ້ມຄອງລາຄາ,
8. ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດຕາມເນື້ອໃນ ຂໍ້ 1, 2, 5 ແລະ 6 ຂອງມາດຕານີ້ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງແຂວງ, ນະຄອນ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 16. ສິດ ແລະ ໜ້າທີ່ຂອງຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ**

ໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ , ເທດສະບານ ມີສິດ ແລະ ໜ້າທີ່ໃນຂອບເຂດເມືອງ ຫຼື ເທດສະບານຂອງຕົນ ດັ່ງນີ້:

1. ຄົ້ນຄ້ວາ, ວິເຄາະ ແລະ ວິໃຈ ກ່ຽວກັບລາຄາ ແລະ ການດຳເນີນທຸລະກິດ ລວມທັງ ສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;
2. ຊີ້ນຳ, ນຳພາ ໜ່ວຍງານຄຸ້ມຄອງສິນຄ້າ ແລະ ປະສານງານກັບ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ ແລະ ຂະແໜ່ງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ;
3. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາ ຕາມດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ;
4. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້ທົ່ວເຖິງ;
5. ຕິດຕາມການເໜັງຕີງຂອງລາຄາ ແລະ ຕິດຕາມພຶດຕິກຳ ທີ່ກ່ຽວຂ້ອງກັບການຄຸ້ມຄອງລາຄາຂອງຜູ້ດຳເນີນທຸລະກິດ;
6. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ ເນື່ອງຈາກການກະທຳອັນມີຜົນກະທົບຕໍ່ລາຄາ;
7. ປັບໃໝ ຜູ້ທີ່ລະເມີດຕາມທີ່ໄດກຳນົດໄວ້ໃນມາດຕາ 26 ຂອງດຳລັດສະບັບນີ້ ຢ່າງເຂັ້ມງວດຕາມ ລາຍການຄວບຄຸມລາຄາ ທີ່ຕົນເປັນອົງການຄຸ້ມຄອງລາຄາ;
8. ສະຫຼຸບ, ລາຍງານ ແລະ ສະເໜີ ກ່ຽວກັບການຈັດຕັ້ງປະຕິບັດຕາມເນືອໃນ ຂໍ້: 1, 2, 5 ແລະ 6 ຂອງມາດຕານີ້ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນ ແລະ ອົງການປົກຄອງແຂວງ, ນະຄອນ, ເມືອງ, ເທດສະບານ;
9. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 17. ສິດ ແລະ ໜ້າທີ່ຂອງຂະແໜ່ງການອື່ນທີ່ກ່ຽວຂ້ອງ ທີ່ເປັນອົງການຄຸ້ມຄອງລາຄາ**

ໃນການຈັດຕັ້ງປະຕິບັດການຄຸ້ມຄອງລາຄາ, ຂະແໜ່ງການອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ດັ່ງຕໍ່ໄປນີ້ ໃນລາຍການຄວບຄຸມລາຄາທີ່ຕົນຖືກກຳນົດເປັນອົງການຄຸ້ມຄອງລາຄາ ຕາມດຳລັດສະບັບນີ້;

1. ຄົ້ນຄວ້າ, ວິເຄາະ ແລະວິໄຈ ກ່ຽວກັບ ລາຄາ ແລະ ການດຳເນີນທຸລະກິດ ລວມທັງ ສະເໜີໂຄງການ, ແຜນງານ ແລະ ມາດຕະການເພື່ອຄຸ້ມຄອງລາຄາ;
2. ໃຫ້ຄວາມຮ່ວມມືແກ່ຂະແໜ່ງອຸດສາຫະກຳ ແລະ ການຄ້າ ໃນການປະຕິບັດສິດ ແລະ

ໜ້າທີ່ຂອງຂະແໜງການດັ່ງກ່າວ ຕາມດໍາລັດສະບັບນີ້;

3. ກໍານົດລະບຽບການ ເພື່ອເປັນເຄື່ອງມືໃນການຈັດຕັ້ງປະຕິບັດ ການຄຸ້ມຄອງລາຄາ;
4. ຈັດຕັ້ງປະຕິບັດການຄຸ້ມຄອງລາຄາຕາມດາລັດສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງໃຫ້ທົ່ວເຖິງ;
5. ເຜີຍແຜ່, ແນະນໍາ ການຈັດຕັ້ງປະຕິບັດດໍາລັດສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງໃຫ້
6. ຕິດຕາມການເໜັງຕີງຂອງລາຄາ ແລະ ຕິດຕາມພຶດຕິກໍາ ທີ່ກ່ຽວຂ້ອງກັບການຄຸ້ມຄອງລາຄາຂອງຜູ້ດໍາເນີນທຸລະກິດ;
7. ຮັບພິຈາລະນາ ແກ້ໄຂຄໍາສະເໜີຂອງຜູ້ທີ່ໄດ້ຮັບຄວາມເດືອດຮ້ອນ ຫຼື ຄວາມເສຍຫາຍ , ເນື່ອງຈາກການກະທໍາອັນມີຜົນກະທົບຕໍ່ລາຄາ;
8. ປັບໃໝຜູ້ທີ່ລະເມີດ ຕາມທີ່ໄດກໍານົດໄວ້ໃນມາດຕາ 26 ຂອງດໍາລັດສະບັບນີ້ຢ່າງເຂັ້ມງວດ ຕາມລາຍການຄວບຄຸມລາຄາ ທີ່ຕົນເປັນອົງການຄຸ້ມຄອງລາຄາ;
9. ຕິດຕາມ, ກວດກາ, ສະຫຼຸບ, ລາຍງານ ແລະສະເໜີ ກ່ຽວກັບການຈັດຕັ້ງປະຕິບັດຕາມເນື້ອໃນຂໍ້ 1, 3, 6 ແລະ 7 ຂອງມາດຕານີ້ຕໍ່ລັດຖະບານ;
10. ອອກແຈ້ງການ, ລະບຽບການ, ຂໍ້ຕົກລົງ ແລະອື່ນໆ ຕາມການມອບໝາຍຂອງລັດຖະບານ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽກົດໝາຍ.

## ໝວດທີ 4
## ສິດ ແລະພັນທະ ຂອງຜູ້ດໍາເນີນທຸລະກິດ

### ມາດຕາ 18. ສິດຂອງຜູ້ດໍາເນີນທຸລະກິດ

ຜູ້ດໍາເນີນທຸລະກິດມີສິດ ດັ່ງນີ້:

1. ກໍານົດລາຄາບົນພື້ນຖານກົນໄກຂອງຕະຫຼາດ ຍົກເວັ້ນແຕ່ສິນຄ້າ ແລະ ການບໍລິການທີ່ນອນໃນລາຍການຄວບຄຸມລາຄາ;
2. ສະເໜີ ຫຼື ຮ້ອງຟ້ອງ ພະນັກງານ ຫຼື ເຈົ້າໜ້າທີ່ ກ່ຽວກັບການປະຕິບັດງານ ເມື່ອເຫັນວ່າມີພຶດຕິກໍາທີ່ບໍ່ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ;
3. ນໍາໃຊ້ສິດອື່ນໆ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

### ມາດຕາ 19. ພັນທະຂອງຜູ້ດໍາເນີນທຸລະກິດ

ຜູ້ດຳເນີນທຸລະກິດມີພັນທະ ດັ່ງນີ້:

1. ສົ່ງບົດລາຍງານການເງິນ ທຸກໆໄຕມາດ, ທຸກເດືອນ ແລະ ໜຶ່ງປີ ສຳລັບ ລາຍການຄວບຄຸມລາຄາ ໃຫ້ອົງການຄຸ້ມຄອງລາຄາທີ່ກ່ຽວຂ້ອງ;
2. ປະຕິບັດຕາມມາດຕະການຄຸ້ມຄອງລາຄາ ທີ່ກຳນົດໄວ້ໃນດຳລັດສະບັບນີ້ ແລະ ທີ່ອົງການຄຸ້ມຄອງລາຄານຳໃຊ້ ໃນແຕ່ລະໄລຍະ;
3. ສະແດງ ຫຼື ຕິດປ້າຍລາຄາ ບໍ່ວ່າສິນຄ້າ ຫຼືການບໍລິການນັ້ນ ຈະນອນໃນລາຍການຄວບຄຸມລາຄາ ຫຼື ບໍ່ກໍຕາມ. ປ້າຍລາຄາສິນຄ້າ ແລະ ຄ່າບໍລິການດັ່ງກ່າວ ຕ້ອງຕິດຢູ່ໃນຮ້ານຄ້າ, ສະຖານທີ່ຄ້າຂາຍສິນຄ້າ ຫຼື ສະຖານທີ່ໃຫ້ການບໍລິການຂອງຕົນ. ການຕິດປ້າຍລາຄາຕ້ອງຈະແຈ້ງ ບໍ່ສ້າງຄວາມສັບສົນໃຫ້ແກ່ຜູ້ຊົມໃຊ້;
4. ຕ້ອງໃຫ້ຄວາມຮ່ວມມື ແກ່ການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່;
5. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 20. ຂໍ້ຫ້າມ ສຳລັບພະນັກງານ ຫຼື ເຈົ້າໜ້າທີ່

ໃນການປະຕິບັດໜ້າທີ່ ຫ້າມພະນັກງານ ຫຼື ເຈົ້າໜ້າທີ່ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ ເພື່ອຮຽກຮ້ອງເອົາຜົນປະໂຫຍດ;
2. ສວຍໃຊ້ອຳນາດເກີນຂອບເຂດ ທີ່ເປັນການບັງຄັບ ແລະ ນາບຂູ່ ເຊັ່ນ: ໃຊ້ຄວາມຮຸນແຮງ, ໃຊ້ອາວຸດ, ທໍລະມານ, ໃຊ້ການກະທຳ ແລະ ວາຈາທີ່ຫຍາບຊ້າ;
3. ປະລະໜ້າທີ່ ແລະ ລົບຫຼີກການເຄື່ອນໄຫວວຽກງານ;
4. ເມີນເສີຍ, ປະໝາດ, ຂາດຄວາມຮັບຜິດຊອບ, ບິດເບືອນຄວາມຈິງ;
5. ປົດບັງ, ປົກປ້ອງ, ເຊື່ອງອຳ ແລະ ໃຫ້ຄວາມຮ່ວມມືແກ່ ຜູ້ກະທຳຄວາມຜິດ ເພື່ອຮັບສິນບົນ ຫຼື ຜົນປະໂຫຍດແນວອື່ນ;
6. ເປີດເຜີຍຄວາມລັບທີ່ໄດ້ຈາກຜູ້ດຳເນີນທຸລະກິດ ນອກເໜືອຈາກເປົ້າໝາຍການຄຸ້ມຄອງລາຄາ ໂດຍບໍ່ໄດ້ຮັບອະນຸຍາດຈາກຜູ້ດຳເນີນທຸລະກິດທີ່ກ່ຽວຂ້ອງ;
7. ມີພຶດຕິກຳອື່ນ ທີ່ລະເມີດລະບຽບກົດໝາຍ.

### ມາດຕາ 21. ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດ

ຫ້າມ ຜູ້ດຳເນີນທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ກະທຳການໃດໆ ໂດຍເຈດຕະນາ ຊຶ່ງເຮັດໃຫ້ລາຄາຕໍ່າ ຫຼື ສູງເກີນຄວນ ຫຼື ເຮັດໃຫ້ເກີດຄວາມປັ່ນປ່ວນໃນສັງຄົມ;
2. ກັກຕຸນສິນຄ້າ ທີ່ນອນໃນລາຍການຄວບຄຸມລາຄາ, ໂດຍມີສິນຄ້າດັ່ງກ່າວ ໄວ້ໃນຄອບຄອງເກີນປະລິມານ ທີ່ອົງການຄຸ້ມຄອງລາຄາໄດ້ກຳນົດໄວ;
3. ເກັບມ້ຽນສິນຄ້າໄວ້ໃນຄັງແຮສຳຮອງອື່ນນອກຈາກຄັງແຮສຳຮອງທີ່ໄດ້ລາຍງານຕໍ່ອົງການຄຸ້ມຄອງລາຄາ;
4. ນຳເອົາສິນຄ້າ ທີ່ຢູ່ໃນລາຍການຄວບຄຸມ ທີ່ມີໄວ້ນັ້ນ ອອກຈຳໜ່າຍ ໂດຍບໍ່ໄດ້ຮັບອານຸຍາດຈາກອົງການຄຸ້ມຄອງລາຄາ;
5. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາ ການຈຳໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນໃນເມື່ອມີຄຳສັ່ງຈາກອົງການຄຸ້ມຄອງລາຄາ

## ໝວດທີ 6
## ນະໂຍບາຍ ຕໍ່ ຜູ້ມີຜົນງານ ແລະ ມາດຕະການ ຕໍ່ ຜູ້ລະເມີດ

### ມາດຕາ 22. ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ດຳເນີນທຸລະກິດ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ດ້ວຍການດຳເນີນ ທຸລະກິດຖືກຕ້ອງ, ໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນ ກ່ຽວກັບລາຄາຢ່າງຖືກຕ້ອງ, ຊັດເຈນ ແລະ ທັນເວລາຈະໄດ້ຮັບການຍ້ອງຍໍ ຫຼື ປະຕິບັດນະໂຍບາຍອື່ນໆຕາມຄວາມເໝາະສົມໃນແຕ່ລະກໍລະນີ.

### ມາດຕາ 23. ມາດຕະການຕໍ່ຜູ້ລະເມີດ

ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

### ມາດຕາ 24 ມາດຕະການສຶກສາອົບຮົມ

ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດດຳລັດສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງອາຍາ ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

### ມາດຕາ 25 ມາດຕະການທາງວິໄນ

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການທາງວິໄນຕາມລະບຽບກົດໝາຍ ທີ່ຄຸ້ມຄອງພວກກ່ຽວ.

**ມາດຕາ 26 ມາດຕະການປັບໃໝ**

ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດດຳລັດສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງອາຍາ ແລະ ພາຍຫຼັງທີ່ໄດ້ຮັບການຕັກເຕືອນ ແລະ ສຶກສາອົບຮົມມາແລ້ວສອງຄັ້ງ, ຈະຖືກປັບໃໝຕາມແຕ່ລະກໍລະນີດັ່ງນີ້:

1. ບໍ່ຕິດປ້າຍລາຄາ ມີໂທດປັບໃໝແຕ່ 500.000 ກີບ ຫາ 1000.000 ກີບ/ຄັ້ງ/ລາຍການ;
2. ບໍ່ແຈ້ງຂໍ້ມູນເທັດ ກ່ຽວກັບໂຄງປະກອບລາຄາ ຫຼື ຄັງແຮສຳຮອງມີໂທດປັບໃໝແຕ່ 1.000.000ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
3. ບໍ່ແຈ້ງໂຄງປະກອບລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
4. ນຳເອົາສິນຄ້າທີ່ມີໄວ້ໃນຄັງແຮສຳຮອງອອກຈຳໜ່າຍ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການ ຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
5. ຢຸດ, ປະຕິເສດ ຫຼື ແກ່ຍາວເວລາ ການຈຳໜ່າຍ ຫຼື ການບໍລິການ ໂດຍບໍ່ມີເຫດຜົນໃນ ເມື່ອມີຄຳສັ່ງຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບ ຫາ 3.000.000 ກີບ/ຄັ້ງ/ລາຍການ;
6. ນຳໃຊ້ໂຄງປະກອບລາຄາ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງລາຄາ ມີໂທດປັບໃໝແຕ່ 1.000.000 ກີບຫາ 5000.000 ກີບ/ຄັ້ງ/ລາຍການ.

**ມາດຕາ 27. ມາດຕະການທາງແພ່ງ ແລະ ທາງອາຍາ**

ມາດຕະການທາງແພ່ງ ແລະ ທາງອາຍາ ແມ່ນໃຫ້ອີງໃສ່ລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 28 ມາດຕະການໂທດເພີ່ມ**

ຜູ້ດຳເນີນທຸລະກິດ ທີ່ໄດ້ລະເມີດດຳລັດສະບັບນີ້ ສາມາດຖືກປະຕິບັດ ມາດຕະການໂທດເພີ່ມເຊັ່ນ: ໂຈະ ຫຼື ຖອນໃບທະບຽນວິສາຫະກິດ, ໃບອະນຸຍາດຕ່າງໆ, ຮິບວັດຖຸສິ່ງຂອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 29. ການຈັດຕັ້ງປະຕິບັດ**

ມອບໃຫ້ ອົງການຄຸ້ມຄອງລາຄາ ຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ໄດ້ຮັບຜົນດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດດຳລັດສະນີ້ ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 30. ຜົນສັກສິດ**

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ສະບັບເລກທີ 207/ນຍ, ລົງວັນທີ 11/10/2001 ແລະ ມີຜົນສັກສິດ ພາຍຫຼັງເກົ້າສິບວັນ ນັບແຕ່ວັນທີ່ຂອງດຳລັດສະບັບນີ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ